## 1. ຄວາມສຳຄັນຂອງກ້າ

ກ້າເປັນສ່ວນປະກອບທີ່ສຳຄັນທີ່ສຸດສຳລັບການສ້າງຜົນຜະລິດ ຫຼື ໝາກຜົນເກັບກ່ຽວເຂົ້າໃນທ້າຍລະດູການ. ຖ້າຕົ້ນກ້າແຂງແຮງ ຈະຊ່ວຍໃຫ້ການປັກດຳງ່າຍ, ແຕກກໍດີ, ຕົ້ນເຂົ້າແຂງແຮງ ແລະ ໃຫ້ຜົນຜະລິດສູງ.

ດັ່ງນັ້ນ, ຈຶ່ງມີຂໍ້ແນະນຳໃນການຕົກກ້າ ເພື່ອໃຫ້ໄດ້ຕົ້ນກ້າທີ່ມຸກ ແລະແຂງແຮງດີ ອັນເປັນຈຸດເລີ່ມຕົ້ນຂອງຄຳວ່າ: **ຍົກສະມັດຕະພາບ** ການຜະລິດເຂົ້າໃຫ້ສູງຂື້ນ.

## 2. ວິທີຕຽມດິນຕ້າກ້າ

ດິນທີ່ຈະໃຊ້ເປັນບ່ອນເຮັດໝານກ້ານັ້ນຕ້ອງເປັນບ່ອນທີ່ຮາບພຽງ ດີໃກ້ແລ່ງນ້ຳ ເພື່ອມີນ້ຳຮັບປະກັນ, ຄວນມີຮົ້ວໜາແໜ້ນປ້ອງກັນ ບໍ່ໃຫ້ສັດທຳລາຍ ແລະບໍ່ໃຫ້ຢູ່ໃກ້ຮົ່ມໄມ້.

ຫຼັງຈາກຊອກບ່ອນໄດ້ແລ້ວໃຫ້ເອົາຝຸ່ນຄອກຫວ່ານໃສ່ໃນອັດຕາ 1 ຫາ 2 ກິໂລ/ຕາແມັດ, ເປົ່ງນ້ຳເຂົ້າ ແລ້ວໄຖຮຸດປະໄວ້ປະມານ 7 ຫາ 15 ວັນ, ແລ້ວຈຶ່ງມາໄຖຄົ້ນ ແລະຄາດໃຫ້ລະອຽດແຫຼກແຫຼວດີ, ຖ້າມີຝຸ່ນເຄມີ ສູດ 16:20:00 ຫຼື 18:46:00 ກໍ່ໃຫ້ຫວ່ານໃສ່ ໃນອັດຕາ 20 ກຼາມ ຕໍ່ 1 ຕາແມັດ ( ໜຶ່ງກຳ ຕໍ່ 1 ຕາແມັດ) .



ຈາກນັ້ນ, ໃຫ້ຍົກເປັນໝານກວ້າງປະມານ 2 ແມັດ ແລະລວງຍາວແລ້ວແຕ່ຄວາມເໝາະສົມຂອງເນື້ອທີ່ຕາກ້າ, ເຮັດຮ່ອງຂັ້ນລະຫວ່າງໝານຕໍ່ໝານ, ໃຫ້ກວ້າງປະມານ 40 ຊັງຕີແມັດຫຼືສອກໜຶ່ງ, ເພື່ອໃຊ້ເປັນທາງຍ່າງໃນການບົວລະບັດຮັກສາ ແລະເປັນຮ່ອງລະບາຍນ້ຳເຂົ້າ ແລະອອກທີ່ສະດວກອີກດ້ວຍ, ຂະໜາດເນື້ອທີ່ລວມຂອງໝານກ້າ (ຕາກ້າ) ສຳລັບຈະໃຊ້ກ້າປັກດຳ 1 ເຮັກຕາ, ຕ້ອງມີປະມານ **800** ຫາ **1,000 ຕາແມັດ**, ສຳລັບເຂົ້າທ່າດອກຄຳ 1 ແລະທ່າດອກຄຳ 5.

**ສະນັ້ນ,** ການນຳໃຊ້ເຕັກນິກກະເສດສຸມຈຶ່ງເປັນເຕັກນິກໜຶ່ງທີ່ສາມາດຍົກສູງສະມັດຕະພາບເຂົ້າໂດຍກົງໃນເນື້ອທີ່ຈຳກັດ, ນອກຈາກນັ້ນຍັງປັບປຸງດິນ ໃນໄລຍະຍາວອີກ.

## 3. ການຕົກກ້າ

### ກ. ການກຳນົດເວລາຕົກກ້າ

ໂດຍທົ່ວໄປແລ້ວໃຫ້ເລີ້ມລົງມືຕົກກ້າ ແຕ່ວັນທີ 15 ພະຈິກ (11) ຫາ 15 ທັນວາ (12), ແມ່ນເປັນເວລາທີ່ເໝາະສົມ, ການຕົກກ້າໃຫ້ເອົາແນວເຂົ້າປູກທີ່ມີອາຍຸຍາວກວ່າໝູ່ຕົກກ່ອນທຳອິດກ່ອນ (ກໍລະນີນຳໃຊ້ຫຼາຍ ແນວພັນ) .

### ຂ. ອັດຕາແນວປູກ

ການເຮັດນາແຊງຈະຕ້ອງໄດ້ປັກດຳຖີ່ກວ່ານາປີ, ເພາະວ່າມີແສງແດດຫຼາຍຕົ້ນເຂົ້າຕ່ຳ ແລະລຳຕົ້ນແຂງແຮງ, ສະນັ້ນ, ໃຫ້ໃຊ້ແນວເຂົ້າປູກໃນອັດຕາ 80 ຫາ 100 ກິໂລ, ສຳລັບຕົກກ້າປັກດຳ 1 ເຮັກຕາ.

### ຄ. ການແຊ່ແນວປູກ

ກ່ອນຈະນຳແນວເຂົ້າປູກໄປແຊ່ນັ້ນຕ້ອງຝັດ, ຮ່ອນເອົາເມັດລີບເມັດ, ຫຍ້າ ແລະສິ່ງເຈືອປົນອື່ນໆອອກໃຫ້ໝົດໃຫ້ຄັດເລືອກເອົາແຕ່ເມັດເຕັມໄປຕາກປະມານ 1 ຫາ 2 ແດດ, ຈາກນັ້ນ, ໃຫ້ເອົາເຂົ້າປູກໃສ່ຟຸ່ຍ ຫຼືໄຫທີ່ບັນຈຸນ້ຳ ແລະໃຫ້ຊາວເອົາເມັດທີ່ຟູຂື້ນໜ້ານ້ຳອອກໃຫ້ໝົດ (ວິທີການເອົາເມັດລີບ ຫຼືເຂົ້າໝາກກາງອອກໃຫ້ໝົດນັ້ນຈະຊ່ວຍຫຼຸດຜ່ອນການເກີດພະຍາດເຫງົ້າເນົ່າໄດ້ ແລະຈະໄດ້ກ້າທີ່ມຸກດີ).

ຈາກນັ້ນ, ອາດຈະເທໃສ່ກະຕ່າ ຫຼືໄຖ່ປ່ານກໍ່ໄດ້ ແຕ່ບໍ່ໃຫ້ແໜ້ນແລ້ວແຊ່ລົງນ້ຳທີ່ສະອາດປະໄວ້ 24 ຊົ່ວໂມງ ຫຼືມື້ໜຶ່ງກັບຄືນໜຶ່ງ.



ຮູບ. ການແຊ່ເມັດພັນເຂົ້າປູກ

**ໝາຍເຫດ:** ຖ້າຫາກທ້ອງຖິ່ນໃດອາກາດໜາວຈັດນັ້ນໃຫ້ຕົ້ມນ້ຳໃຫ້ຟົດແລ້ວເອົານ້ຳເຢັນປະສົມໃນອັດຕາສ່ວນ 2 ຮ້ອນ 3 ເຢັນ, ໃຫ້ນ້ຳພໍອຸ່ນເອົາມືຈຸ່ມລົງໄດ້ແລ້ວຈຶ່ງເອົາກະຕ່າ ຫຼືກະບຸງແນວເຂົ້າປູກແຊ່ລົງປະໄວ້ມື້ໜຶ່ງກັບຄືນໜຶ່ງເພື່ອເລັ່ງໃຫ້ເມັດເຂົ້າງອກໄວຂື້ນ.

### ງ. ການບົ່ມແນວປູກ

ກ່ອນອື່ນຕ້ອງກະກຽມສະຖານທີ່ບົ່ມເຊັ່ນ: ໃນບາງເຂດທີ່ມີອາກາດໜາວຄວນຂຸດຂຸມ, ສຳລັບບົ່ມຂະໜາດຂອງຂຸມເລິກປະມານ 45 ຫາ 50 ຊຕມ, ລວງກວ້າງສຸດແລ້ວແຕ່ຈະພໍດີ, ເອົາເຟືອງຮອງພື້ນແລ້ວຈຶ່ງເອົາເຂົ້າປູກທີ່ແຊ່ ຊຶ່ງໄດ້ບັນຈຸໃສ່ໄຖແລ້ວນັ້ນລົງເອົາເຟືອງປົກເປັນຊັ້ນທຳອິດ ແລ້ວກໍ່ເອົາແພຢາງປົກເປັນຊັ້ນທີສອງ, ຈາກນັ້ນ, ກໍ່ເອົາເຟືອງປົກໃຫ້ໜາພໍສົມຄວນ ແລະເອົາໄມ້ ຫຼືວັດຖຸທີ່ໜັກເຕັງໄວ້, ມື້ຕໍ່ມາໃຫ້ເອົານ້ຳອຸ່ນພົມໄຖ່ແນວປູກແລ້ວປົກໄວ້ຄືນ.

ສຳລັບເຂດອົບອຸ່ນແມ່ນໃຫ້ເອົາເຂົ້າທີ່ແຊ່ນັ້ນຂື້ນມາແລ້ວເອົາໄຖ່ປ່ານຈຸ່ມນ້ຳໃຫ້ປຽກດີມາປົກຄຸມໃຫ້ຫຸ້ມໝົດປະໄວ້ປະມານ 36 ຫາ 48 ຊົ່ວໂມງ, (ເອົານ້ຳຫົດມື້ເຊົ້າ ແລະມື້ແລງໃຫ້ອຸ່ນຕະຫຼອດເວລາ), ເມື່ອເຫັນໜໍ່ເຂົ້າອອກປະມານ 3 ຫາ 5 ມມ, ແລ້ວຈຶ່ງນຳເອົາ

ໄປຫວ່ານໃສ່ໜານກ້າທີ່ກຽມໄວ້ນັ້ນ.

### ຈ. ການຫວ່ານກ້າ

ເນື້ອທີ່ຕາກ້າ 1 ແມັດມົນທົນ, ຕ້ອງຫວ່ານກ້າທີ່ງອກແລ້ວປະມານ 80 ຫາ 100 ກຼາມ ຂອງເມັດແຫ້ງ, ໃຫ້ຫວ່ານຢ່າງສະໝໍ່າສະເໝີ, ການຫວ່ານນັ້ນຕ້ອງໄດ້ເອົາໃຈໃສ່ທີ່ສຸດ, ເພື່ອໃຫ້ເມັດເຂົ້າຝັງປະມານ 2 / 3 ຄື ໃຫ້ສົ້ນໜຶ່ງຂອງເມັດເຂົ້າພົ້ນດິນຂຶ້ນມາ, ເວົ້າລວມແລ້ວແມ່ນໃຫ້ຫວ່ານກ້າເວລາດິນຕາກ້າພໍແຂ້ນເປັນຕົມພໍດີງາມ, ໝາຍວ່າບໍ່ຄວນໃຫ້ໜ້າດິນຂອງຕາກ້າແຫຼວເກີນໄປ ເພາະວ່າເວລາຫວ່ານນັ້ນເມັດເຂົ້າຈະຫຼົບລົງຕົມໂພດ ແລ້ວກໍຈະພາໃຫ້ການປົ່ງໜໍ່ຂອງກ້າຫຍຸ້ງຍາກ, ກົງກັນຂ້າມຫາກໜ້າດິນ ຂອງໜານກ້ານັ້ນແຫ້ງເກີນໄປ, ເວລາຫວ່ານກ້າເມັດເຂົ້າຈະບໍ່ຈົມດິນແລ້ວ ນົກ, ໜູ, ມົດ, ແມງສັດຕູພືດອື່ນໆ ກໍ່ຈະມາກິນໝົດ.

### ສ. ການບົວລະບັດຮັກສາໜານກ້າ

ຫຼັງຈາກຫວ່ານກ້າ 3 ຫາ 4 ວັນແລ້ວ, ໃຫ້ຄ່ອຍເປັ່ງນໍ້າເຂົ້າຕາກ້າ ການເປັ່ງນໍ້າເຂົ້າໃນໄລຍະທໍາອິດບໍ່ໃຫ້ຖ້ວມຕົ້ນກ້າ, ລະດັບນໍ້າຈະຕ້ອງໃຫ້ພໍດີຖ້ວມໜ້າດິນປະມານ 1 ຊຕມ ກໍ່ພໍ, ໃນກໍລະນີຫຼາຍໂພດກໍ່ໃຫ້ເປັ່ງອອກ, ເມື່ອອາຍຸກ້າປະມານ 10 ວັນແລ້ວ, ໃຫ້ເປັ່ງນໍ້າເຂົ້າຂັງໄວ້ ໂດຍໃຫ້ຮັກສາລະດັບນໍ້າຈາກໜ້າດິນຂຶ້ນໄປ, ປະມານ 5 ຊຕມ. ໃນກໍລະນີທີ່ບ່ອນໃດມີລົມພັດແຮງເປັນປະຈໍາ ຫຼືໃນໄລຍະອຸ່ນຫະພູມຂອງອາກາດມີຄວາມໜາວຈັດນັ້ນໃຫ້ຊອກຫາໃບໄມ້ ຫຼືຜ້າຢາງໄປລ້ອມໜານກ້າໄວ້, ເຮັດແນວນີ້ກໍ່ເພື່ອຮັກສາອຸ່ນຫະພູມຢູ່ໜານກ້າໃຫ້ສະໝໍ່າສະເໝີ.

### ຊ. ອາຍຸຂອງກ້າ

ເພື່ອຮັບປະກັນໃຫ້ຜົນເກັບກ່ຽວສູງ, ອາຍຸກ້າທີ່ຈະນໍາໄປປັກດໍາຕ້ອງນອນໃນຊ່ວງລະຫວ່າງ 20 ຫາ 25 ວັນ, ແຕ່ວ່າໃນລະດູແລ້ງນີ້ຫຼາຍທ້ອງຖິ່ນອາກາດເລັ້ນເຢັນ ແລະໜາວ, ນັບແຕ່ຕົ້ນເດືອນ 12 ສາກົນເປັນຕົ້ນໄປ ຍ້ອນອຸນຫະພູມຕໍ່າ, ແນວພັນເຂົ້າເປັນພັນປັບປຸງ, ຕົ້ນກ້າທີ່ມີອາຍຸຕໍ່າກວ່າ 20 ວັນແລ້ວກໍ່ອາດອ່ອນນ້ອຍ ແລະ ຕົ້ນສັ້ນຈົນບໍ່ສາມາດຈະຫຼົກໄດ້ຊໍ້າ, ໃນກໍລະນີເຊັ່ນນີ້ກໍ່ປ່ອຍໃຫ້ກ້າມີໃບປົ່ງ 4 ຫາ 5 ໃບ, ຈຶ່ງຫຼົກໄປປັກດໍາກໍ່ໄດ້.



Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.
Tel/fax: 021 732 162 Mobile: 020 5526277
Email: leap@laoex.org
Email: cetdu@laoex.org

ກະຊວງກະສິກໍາ ແລະ ປ່າໄມ້
ກອງສົ່ງເສີມກະສິກໍາ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ

## ຂໍ້ແນະນໍາ

# ເຕັກນິກການຕົກກ້ານາແຊງ



ຈັດຕັ້ງປະຕິບັດໂດຍ: **CETDU**
(ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)
ຮ່ວມກັບ:
ໂຄງການ ສົ່ງເສີມ ກະສິກໍາ **(LEAP)**